**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 20 ທັນວາ 2009 (12-20-2009)**

## <u>ຈົ່ງໄປບອກຢູ່ເທິງພູສູງ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ລູກາ 1:67-79)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?</u>**: ບົດຮຽນນີ້ເວົ້າເຖິງຜູ້ປະກາດພຣະທັມ ຊາຄາຣີຢາ ໄດ້ມອງເຫັນແຜນການຂອງພຣະເຈົ້າໄດ້ສຳເຣັດລົງຄື ໄດ້ຊົງປະທານຄວາມພົ້ນໃຫ້ແກ່ຜູ້ທີ່ເຊື່ອ ເວລາພຣະເມຊີອາ ໄດ້ສະເດັດມາ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?</u>**: ທ່ານສາມາດຮັບເອົາການໃຫ້ອະພັຍຄວາມຜິດບາບ, ເສຣີພາບ ແລະຮັບໃຊ້ໂດຍທາງອົງພຣະເຢຊູ ຢ່າງມີປະສິດທິພາບ ແລະມີຄຸນຄ່າ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?</u>**:
ຄົນອາວຸໂສທຸກຄົນຊອກສແວງຫາຄວາມໝາຍຂອງຊີວິດ. ໃນວັນຄຣິສມັສ ພວກເຂົາເຈົ້າຊອກຫາຄວາມໝາຍ ໂດຍການມອບ ແລະຮັບເອົາຂອງຂວັນ. ໃຫ້ພວກເຮົາພາກັນເຂົ້າໃຈວ່າ ຄວາມພົ້ນຈາກພຣະເຈົ້ານັ້ນ ແມ່ນຂອງຂວັນອັນປະເສີດ ເພື່ອແບ່ງປັນໃຫ້ກັບມະນຸດ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ</u>**:
1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: ບົດຮຽນນີ້ໄດ້ສະທ້ອນເຖິງຊີວິດຂອງທ່ານແນວໃດແດ່?
ໃນເພງສັຣເສີນຂອງບັບຕິສບົດທີ 95, ແລະບົດທ 182 ໄດ້ສະທ້ອນໃຫ້ເຫັນເຖິງການບັງເກີດຂອງພຣະເຢຊູຄຣິດ ການປະກາດນີ້ໄດ້ສະທ້ອນເຖິງຊີວິດສ່ວນຕົວຂອງທ່ານແນວໃດ?
ຊີວິດຂອງຊາຄາຣີຢາ ແລະເອລີຊາເບັດແລະຂອງເທວະດາປາກົດຢູ່ໃນ ລູກາ 1:5-25 ເປັນຢ່າງດີ ໃນລູກາ 1:57-66 ເຊັ່ນກັນ.ໃຫ້ນັກຮຽນຜູ້ນຶ່ງສະແດງເປັນ ຊາຄາຣີຢາ ແລະອີກຜູ້ນຶ່ງສະແດງເປັນເອລີຊາເບັດ ຕາມລູກາ 1:57-66. ແລະນັກຮຽນທີ່ເຫລືອນັ້ນສະແດງເປັນເພື່ອນບ້ານ ແລະພີ່ນ້ອງ, ໃຊ້ແຜ່ນໄມ້ແປໆ ແລະໃຫ້ຊາຄາຣີຢາຂຽນ.

1. **<u>ພຣະເຈົ້າຊ່ອຍພວກເຮົາໃຫ້ພົ້ນຈາກຄວາມຜິດບາບ:</u>** (ລູກາ 1:67-71)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 1:67-71
- ອະທິບາຍ ພຣະທັມລູກາ 1:68-79 ແມ່ນບົດສັຣເສີນຂອງຊາຄາຣີຢາ ຫລືເປັນບົດເພງສັຣເສີນຂອງຊາຄາຣີຢາທີ່ສັຣເສີນອົງພຣະຜູ້ເປັນເຈົ້າ. ຄຳວ່າພາວັນນາສັຣເສີນນັ້ນໝາຍຄວາມວ່າ ຄຳດີໆທັງນັ້ນ ຫລື ການອວຍພອນ ແລະມາຈາກຄຳທຳອິດຂອງຂໍ້ 68 ທີ່ກ່ຽວຂ້ອງກັບພຣະຄັມພີ. ຊາຄາຣີຢາເວົ້າບໍ່ໄດ້ 9 ເດືອນ. ເປັນຫຍັງຊາຄາຣີຢາຈຶ່ງບອກຊື່ລູກຂອງລາວອອກມາຕາມສຽງເພງ?
- ວັທນະທັມຂອງພວກເຮົາທຸກມື້ນີ້ເປັນປໍຣະປັກຕໍ່ຄຣິສຕຽນ, ບັນດາຜູ້ທີ່ເຊື່ອທັງຫລາຍຕ້ອງຮູ້ຈັກວິທີການແບ່ງປັນຄວາມເຊື່ອຂອງຕົນ. ເພາະມັນເປັນການສຳຄັນສຳລັບຜູ້ທີ່ເຊື່ອ ບໍ່ພຽງແຕ່ແບ່ງປັນແມ່ນຫຍັງທີ່ເຂົາເຈົ້າເຊື່ອ, ແຕ່ຕ້ອງອະທິບາຍວ່າເປັນຫຍັງຈຶ່ງໄດ້ເຊື່ອ.
- ໃຫ້ນັກຮຽນອ່ານ ລູກາ 1:71 ອີກ ແລ້ວເວົ້າວ່າ ຊາຄາຣີຢາໄດ້ຮ້ອງເພງການປ່ຽນແປງເຮັດຜູ້ໄດ້ຍິນມີຄວາມສົນໃຈໃນເຣື່ອງການລອດພົ້ນຈາກສັດຕຣູ ພົ້ນຈາກມືຂອງຄົນທັງປວງທີ່ຊັງພວກເຮົາ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ລູກາ 1:67-71)

1. ຄວາມເຊື່ອຂອງທ່ານໄດ້ມີສ່ວນກ່ຽວຂ້ອງກັບເພງນີ້ ຫລືບໍ່? ຖ້າບໍ່ ເປັນຫຍັງຈຶ່ງບໍ່?
2. ມີໃຜແດ່ທີ່ມີຄວາມເຊື່ອນອກຈາກເຊື່ອໃນພຣະເຢຊູຄຣິດທີ່ທ່ານຮູ້ຈັກ? ທ່ານຈະແບ່ງປັນຄວາມເຊື່ອຂອງທ່ານກັບຄົນເຫລົ່ານີ້ຫຍັງແດ່ໃນອາທິດນີ້?
3. ຣະບົບຂອງສັງຄົມໄດ້ເຮັດໃຫ້ທ່ານມີຄວາມທຸກໃຈແນວໃດແດ່ທີ່ຄ້າງຄາຢູ່ໃນຊີວິດຂອງທ່ານ?
4. ທ່ານໄດ້ສແວງຫາການປົດປ່ອຍໃຫ້ທ່ານໄດ້ພົ້ນຈາກສິ່ງນີ້ຢູ່ບໍ່?
5. ທ່ານມີຄວາມປາຖນາຢາກໃຫ້ຄົນທັງໂລກຫັນປ່ຽນມາຫາງພຣະເຢຊູຄຣິດຢູ່ບໍ່? ແລ້ວທ່ານຈະເຮັດແນວໃດ?
6. ການຖືກຄວບຄຸມອັນໃດທີ່ທ່ານຈະເຮັດໃຫ້ພົ້ນໄດ້ໂດຍ ການໃຫ້ອະພັຍ ຈິດໃຈທີ່ດີຕາມຄວາມຈິງຂອງຂ່າວປະເສີດໄດ້?

2. **<u>ພຣະເຈົ້າປະທານຄວາມພົ້ນໃຫ້ພວກເຮົາເພື່ອຮັບໃຊ້:</u>** (ລູກາ 1:72-77)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 1:72-77
- ມີຄຣິສຕຽນຫລາຍຄົນມີຄວາມຢ້ານກົວທີ່ຈະຮັບໃຊ້ພຣະເຈົ້າເພາະວ່າ...."ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ 2 ຕີໂມທຽວ 1:7. ຄຳຖາມ: ພຣະຄຳຂໍ້ນີ້ໄດ້ໜູນໃຈພວກເຮົາໃຫ້ມີຄວາມກ້າຫານແນວໃດ?
- ຂຽນຄຳວ່າ "ບໍຣິສຸດ ແລະຊອບທັມ ໃສ່ກະດານ. ໃຫ້ນັກຮຽນອະທິບາຍ ແລະຂຽນທາງທີ່ພວກເຮົາສາມາດຮັບໃຊ້ພຣະເຈົ້າໄດ້ໂດຍທາງບໍຣິສຸດ ແລະທາງຊອບທັມ, ຂຽນທາງບໍຣິສຸດລົງໃສ່ກ້ອງ ບໍຣິສຸດ, ຂຽນທາງຊອບທັມໃສ່ກ້ອງ ຊອບທັມ.
- ພຣະເຈົ້າໄດ້ຊົງເອີ້ນພວກເຮົາແຕ່ລະຄົນໃຫ້ເປັນຜູ້ປ່າວປະກາດຂ່າວປະເສີດຂອງອົງພຣະເຢຊູຄຣິດເໝືອນກັບໂຢຮັນບັບຕິສໂຕ. ພຣະເຈົ້າໄດ້ຊົງເອີ້ນພວກເຮົາໃຫ້ໄປ, ອະທິຖານ, ເສີມສ້າງ, ເຕີບໂຕ, ແລະຮັບໃຊ້ຮ່ວມກັນກັບຄົນອື່ນໃຫ້ຖືກຕາມຣະບຽບຕາມທາງຂອງພຣະອົງ ເໝືອນກັນກັບ ຜູ້ເຜີຍແຜ່ພຣະວັຈນະ.
- ພວກເຮົາມີຄວາມຊົມຊື່ນຍິນດີກັບພຣະທັມແຫ່ງຄວາມຫວັງ ແລະຂ່າວປະເສີດ ໃຫ້ນຳສິ່ງນີ້ອອກໄປຫາຊົນຊາດຕ່າງໆ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄໍາພີ:** ລູກາ 1:72-77

1. ໂດຍສ່ວນຕົວຂອງທ່ານ ທ່ານໄດ້ຮັບພຣະສັນຍາບໍຣິສຸດຈາກພຣະເຈົ້າທີ່ໃຫ້ກັບອັບຣາຮາມແນວໃດ?
2. ທ່ານຕ້ອງການປ່ຽນແປງການຮັບໃຊ້ເພື່ອບໍ່ໃຫ້ມີຄວາມຢ້ານກົວດ້ວຍຄວາມບໍຣິສຸດ ແລະຊອບທັມໄດ້ຢ່າງໃດ?
3. ພາກສ່ວນໃດໃນພຣະເຈົ້າທີ່ທ່ານຈະນໍາອອກໄປປະກາດໃຫ້ພວກຫລົງຫາຍ ເພື່ອພຣະເຢຊູຄຣິດ?

## 3 . **ພຣະເຈົ້າຊ່ວຍພວກເຮົາໃຫ້ພົ້ນເພື່ອສ້າງສັນຕິສຸກ:** (ລູກາ 1:78-79)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ລູກາ 1:78-79
- ຖ້າເປັນໄປໄດ້ໃຫ້ປິດໄຟໃນຫ້ອງຮຽນຂອງທ່ານຊົ່ວຄາວ. ເຍືອງໄຟສາຍຂຶ້ນເທິງ ແລ້ວໃຫ້ນັກຮຽນຜູ້ນຶ່ງບອກຜົນການໄດ້ຮັບຈາກແສງໄຟນັ້ນ. ຖາມວ່າ: ແມ່ນຫຍັງທີ່ແສງໄຟສະແດງອອກມາໃຫ້ເຫັນ?
- ໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ຈົດບັນຊີ 24:17. ແລ້ວຖາມວ່າ ສິ່ງເຫລົ່ານີ້ມີຄວາມກ່ຽວພັນເຖິງແສງສວ່າງຈາກທີ່ສູງ ໃນພຣະທັມລູກາ 1:78 ແນວໃດ?
- ໃຫ້ນັກຮຽນອະທິບາຍເຖິງຄວາມມືດມົນຂອງໂລກຂອງພວກເຮົາ. ປຽບທຽບໃສ່ກັບໂລກຂອງພວກເຮົາໃນມື້ພິພາກສາໃນພຣະທັມ ພວກຜູ້ປົກຄອງ 17:6. ອີງຕາມພຣະທັມລູກາ 1:78-79, ເປັນຫຍັງແສງສວ່າງຈາກທີ່ສູງຈຶ່ງສ່ອງເຂົ້າມາໃນທີ່ມືດ?
- ແມ່ນອັນໃດເປັນສັນຕິສຸກອັນແທ້ຈິງທີ່ອີງຕາມລູກາ 1:78-79 ?
- ຄຣິສຕຽນໃນສມັຍນີ້ສາມາດດໍາຣົງຊີວິດຢູ່ໃນສັນຕິສຸກອັນແທ້ຈິງໄດ້ຢ່າງໃດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄໍາພີ:** ລູກາ 1:78-79

1. ແສງສວ່າງໃນ (ລູກາ 1:78)ໄດ້ສ່ອງເຂົ້າມາໃນຄວາມມືດໃນຊີວິດຂອງທ່ານແນວໃດ? ຖ້າຍັງບໍ່ທັນໄດ້ສ່ອງເຂົ້າມາ, ຂັ້ນຕອນທີ່ທ່ານຈະເຊື້ອເຊີນໃຫ້ສ່ອງເຂົ້າມາໃນຄວາມມືດຂອງທ່ານນັ້ນເຮັດແນວໃດ?
2. ຊີວິດຈິດວິນຍານໃນຊີວິດຂອງທ່ານຕ້ອງການຫຍັງໃນຣະດູນີ້?
3. ພຣະເຈົ້າໄດ້ຈັດຕຽມໃຫ້ຈິດໃຈຂອງທ່ານໃຫ້ຮັກສາສຸຂພາບທີ່ດີໃນຣະດູນີ້ຢ່າງໃດ?

## **ພຣະຄໍາພີແຫ່ງຄວາມຈິງ**

ຄຣິສຕຽນທຸກຄົນມີໜ້າທີ່ບອກຂ່າວດີເຣື່ອງຂອງຂວັນອັນສຈັນແຫ່ງຄວາມລອດພົ້ນໃນພຣະເຢຊູຄຣິດ.

- ຄົນຜູ້ທີ່ຍັງບໍ່ໄດ້ຮັບຄວາມລອດພົ້ນສາມາດຮັບເອົາຄວາມລອດພົ້ນທີ່ພຣະເຈົ້າຈັດຕຽມໃຫ້ໂດຍຜ່ານທາງພຣະເຢຊູ, ພຣະເມຊີອາ, ແລະຄຣິສຕຽນໄດ້ສັຣເສີນພຣະເຈົ້າສໍາລັບຄວາມລອດພົ້ນຂອງເຂົາເຈົ້າ.
- ບັນດາຜູ້ທີ່ເຊື່ອທັງຫລາຍ, ພວກເຮົາມີບໍ່ມີສິດທິພິເສດໃດເທົ່າການຮັບໃຊ້ພຣະເຈົ້າໂດຍການຊ່ວຍເຫລືອຄົນອື່ນ, ແລະພວກເຮົາສາມາດທໍາເຊັ່ນນັ້ນໂດຍບໍ່ຕ້ອງຢ້ານກົວ.
- ໃນການພັງທະລາຍໂລກແຫ່ງຄວາມມືດ, ແລ້ວມາເຊື່ອໄວ້ວາງໃຈໃນພຣະຄຣິດເຮັດໃຫ້ຜູ້ທີ່ເຊື່ອທັງຫລາຍມີຊີວິດຢູ່ຢ່າງສັນຕິສຸກ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**